ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*********************

1742

ກະຊວງການເງິນ

ເລກທີ /ກງ.

ນະຄອນຫລວງວຽງຈັນ, ວັນທີ 02 JUL 2013

**ຄຳສັ່ງແນະນຳ**

ກ່ຽວກັບການປະຕິບັດພັນທະອາກອນ, ເງິນປັນຜົນຂອງບໍລິສັດລັດວິສາຫະກິດຫວຍພັດທະນາ,
ບັນດາຕົວແທນຈຳໜ່າຍ, ສາຂາຈຳໜ່າຍ ແລະ ຜູ້ຂາຍຍ່ອຍໃບຫວຍໃນຂອບເຂດທົ່ວປະເທດ.

ເຖິງ: ຫົວໜ້າກົມສ່ວຍສາອາກອນ, ຫົວໜ້າພະແນກການເງິນ, ຫົວໜ້າພະແນກສ່ວຍສາອາກອນປະຈຳແຂວງ, ນະຄອນຫລວງ ຕະຫລອດເຖິງບໍລິສັດລັດວິສາຫະກິດຫວຍພັດທະນາ ແລະ ຕົວແທນຈຳໜ່າຍ, ສາຂາຈຳໜ່າຍຫວຍທຸກປະເພດໃນຂອບເຂດທົ່ວປະເທດ.

ເລື່ອງ: ການປະຕິບັດພັນທະອາກອນປະເພດຕ່າງໆຂອງກິດຈະການຫວຍທຸກປະເພດ.

- ອີງຕາມ ກົດໝາຍວ່າດ້ວຍສ່ວຍສາອາກອນສະບັບເລກທີ 05/ສພຊ, ລົງວັນທີ 20 ທັນວາ 2011;
- ອີງຕາມ ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມສະບັບເລກທີ 04/ສພຊ, ລົງວັນທີ 26 ທັນວາ 2006;

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດລະບຽບກົດໝາຍໃຫ້ຖືກຕ້ອງສອດຄ່ອງ ແລະ ເພື່ອເຮັດໃຫ້ການປະຕິບັດພັນທະໃຫ້ຖືກຕ້ອງ ແລະ ເປັນເອກະພາບກັນໃນຂອບເຂດທົ່ວປະເທດ,ກະຊວງການເງິນອອກຄຳສັ່ງແນະນຳ ດັ່ງນີ້:

1. **ອາກອນມູນຄ່າເພີ່ມ**

ພື້ນຖານຄິດໄລ່ອາກອນມູນຄ່າເພີ່ມ ຂອງກິດຈະການຫວຍ ແມ່ນໃຫ້ເອົາມູນຄ່າຜິດດ່ຽງ ລະຫວ່າງ ມູນຄ່າຂາຍໃບຫວຍທັງໝົດ ລົບໃຫ້ມູນຄ່າຖືກລາງວັນເປັນເງິນສົດ ຫຼື ວັດຖຸ ຍັງເຫຼືອເທົ່າໃດ ຈຶ່ງເອົາເປັນພື້ນຖານຄິດໄລ່ອາກອນມູນຄ່າເພີ່ມ.

- ໃນກໍລະນີ ມູນຄ່າຂາຍໃບຫວຍໃນເດືອນ ໜ້ອຍກວ່າມູນຄ່າຖືກລາງວັນ ຈຳນວນຜິດດ່ຽງພາຍໃນເດືອນ ສາມາດຍົກໄປຫັກກັບມູນຄ່າຂາຍໃບຫວຍຂອງເດືອນຕໍ່ໄປໃນຂອບເຂດຂອງປີການບັນຊີ.
- ການແຈ້ງເສຍອາກອນມູນຄ່າເພີ່ມຂອງບໍລິສັດລັດວິສາຫະກິດຫວຍພັດທະນາ, ບັນດາຕົວແທນຈຳໜ່າຍ, ສາຂາຈຳໜ່າຍໃຫ້ແຈ້ງເສຍກ່ອນ ວັນທີ 15 ຂອງເດືອນຕໍ່ໄປ ສຳລັບບໍລິສັດລັດວິສາຫະກິດຫວຍພັດທະນາໃຫ້ແຈ້ງເສຍຢູ່ທີ່ກົມສ່ວຍສາອາກອນ ແລະ ບັນດາຕົວແທນຈຳໜ່າຍ, ສາຂາຈຳໜ່າຍ ແມ່ນໃຫ້ແຈ້ງເສຍຢູ່ທີ່ ພະແນກສ່ວຍສາອາກອນປະ ຈຳແຂວງ, ນະຄອນຫລວງ ບ່ອນທີ່ຕົວແທນ ຫຼື ສາຂາຕັ້ງຢູ່.
- ອາກອນມູນຄ່າເພີ່ມທີ່ຕົວແທນຈຳໜ່າຍ ຫຼື ສາຂາຈຳໜ່າຍຫວຍພັດທະນາຕັ້ງຢູ່ແຂວງ, ນະຄອນຫລວງວຽງຈັນທີ່ໄດ້ເສຍອາກອນ ມູນຄ່າເພີ່ມເບື້ອງສົ້ນເຂົ້າຢູ່ຕົ້ນທາງ ໃນເວລາຊື້ຍົກໃບຫວຍນຳບໍລິສັດລັດວິສາຫະກິດຫວຍພັດທະນາ ແມ່ນ ອະນຸຍາດໃຫ້ຫັກອອກ ຈາກອາກອນມູນຄ່າເພີ່ມ ທີ່ຈະຕ້ອງມອບປະຈຳເດືອນ ແລະ ສາມາດຍົກໄປຫັກຕໍ່ໄດ້ຈົນກວ່າຈະໝົດ.

<u>ຕົວຢ່າງວິທີຄິດໄລ່:</u>

1. ໃນເດືອນ 01/2013 ສາຂາຈຳໜ່າຍຫວຍພັດທະນາ (ກ) ຂາຍຫວຍໄດ້ທັງໝົດ 100 ລ້ານກີບ ແລະ ໃນເດືອນດຽວກັນມີຜູ້ຖືກລາງວັນ 120 ລ້ານກີບ, ອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າເສຍຢູ່ຕົ້ນທາງ (ຕາມໃບແຈ້ງເກັບເງິນຂອງລັດ *ວິສາຫະກິດ ຫວຍພັດທະນາ* ) *ຈຳນວນ 1 ລ້ານກີບ.*

ພື້ນຖານຄິດໄລ່ອາກອນມູນຄ່າເພີ່ມ: ມູນຄ່າຂາຍຫວຍ 100 ລ້ານກີບ-ມູນຄ່າຖືກລາງວັນ 120 ລ້ານກີບ ເທົ່າກັບຕິດລົບ 20 ລ້ານກີບ ເປັນຕົວເລກຜິດດ່ຽງຍົກໄປຫັກກັບມູນຄ່າຂາຍຫວຍເດືອນຕໍ່ໄປ.

2. ໃນເດືອນ 02/2013 ສາຂາຫວຍຈຳໜ່າຍຫວຍພັດທະນາ (ກ) ຂາຍຫວຍໄດ້ 150 ລ້ານກີບ ແລະ ໃນເດືອນດຽວກັນ ມີຜູ້ຖືກລາງວັນ 30 ລ້ານກີບ, ອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າທີ່ໄດ້ເສຍແລ້ວຢູ່ຕົ້ນທາງ (ຕາມໃບແຈ້ງເກັບເງິນຂອງລັດວິສາຫະກິດຫວຍພັດທະນາ) ຈຳນວນ 1,5 ລ້ານກີບ.

ພື້ນຖານຄິດໄລ່ອາກອນມູນຄ່າເພີ່ມ: ມູນຄ່າຂາຍໃບຫວຍ-ມູນຄ່າຖືກລາງວັນ ແລະ - ຈຳນວນຜິດດ່ຽງ (ຕິດລົບ) ຂອງເດືອນ 01/2013.

150 ລ້ານກີບ-30 ລ້ານກີບ-20 ລ້ານກີບ=100 ລ້ານກີບ.

ລາຍຮັບທຸລະກິດທີ່ຖືກເສຍອາກອນ = $\frac{100 \text{ ລ້ານ} \times 100}{110}$ = 90,90 ລ້ານກີບ.

- ອາກອນມູນຄ່າເພີ່ມປະຈຳເດືອນ 02/2013: 90,90 ລ້ານກີບx10%=9,09 ລ້ານກີບ.
- ອາກອນມູນຄ່າເພີ່ມເສຍແລ້ວຢູ່ຕົ້ນທາງເດືອນ 01/1013 ຈຳນວນ 1 ລ້ານກີບ ແລະ ເດືອນ 02/2013 ຈຳນວນ 1,5 ລ້ານກີບ: 2,5 ລ້ານກີບ.
- ອາກາມມູນຄ່າເພີ່ມຕ້ອງຈ່າຍຕົວຈິງໃນເດືອນ 02/2013: 9,09 ລ້ານກີບ -2,5 ລ້ານ ກີບ =6,59 ລ້ານກີບ.

2. ອາກອນຊົມໃຊ້

ອີງຕາມມາດຕາ 21 ຂໍ້ທີ 2 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນສະບັບເລກທີ 05/ສພຊ, ລົງວັນທີ 20 ທັນວາ 2011 ພື້ນຖານຄິດໄລ່ອາກອນຊົມໃຊ້ຂອງຫວຍພັດທະນາ ແມ່ນ ລາຄາຕົ້ນທຶນຂອງການບໍລິການຂາຍໃບຫວຍໃນເດືອນ ຊຶ່ງປະກອບດ້ວຍ: ມູນຄ່າພິມໃບຫວຍ, ຄ່າແຮງງານຜະລິດໃບຫວຍ ແລະ ອຸປະກອນຮັບໃຊ້ການພິມໃບຫວຍ.

-ການແຈ້ງເສຍອາກອນຊົມໃຊ້ຂອງບໍລິສັດລັດວິສາຫະກິດຫວຍພັດທະນາ ຕ້ອງແຈ້ງເສຍກ່ອນວັນທີ 15 ຂອງເດືອນຕໍ່ໄປ ທີ່ກົມສ່ວຍສາອາກອນ.

<u>ຕົວຢ່າງ ວິທີຄິດໄລ່:</u>

| | |
|---|---|
| -ຈ້າງທາງນອກພິມໃບຫວຍໃນເດືອນ: | 185,000,000 ກີບ. |
| -ຄ່າແຮງງານຜະລິດໃບຫວຍ: | 78,000,000 ກີບ. |
| -ຄ່າເຄື່ອງອຸປະກອນຮັບໃຊ້ການພິມໃບຫວຍ: | 195,000,000 ກີບ. |
| ລວມພື້ນຖານຄິດໄລ່ອາກອນຊົມໃຊ້: | 458,000,000 ກີບ |

- ອາກອນຊົມໃຊ້ປະຈຳເດືອນຕ້ອງມອບ: 458,000,000x25%= 114,500,000 ກີບ;
- ສ່ວນຕົວແທນຈຳໜ່າຍ ຫຼື ສາຂາຈຳໜ່າຍຫວຍພັດທະນາ ແມ່ນ ຈະບໍ່ໄດ້ເສຍອາກອນຊົມໃຊ້ຕື່ມອີກ.

3. ອາກອນກຳໄລ

ການຄິດໄລ່ອາກອນກຳໄລຂອງບໍລິສັດລັດວິສາຫະກິດຫວຍພັດທະນາ, ຕົວແທນ ຫຼື ສາຂາຈຳໜ່າຍຫວຍພັດທະນາຢູ່ແຂວງ,ນະຄອນຫລວງວຽງຈັນຕ້ອງຖືບັນຊີຕາມກົດໝາຍກຳນົດໄວ້,ອັດຕາອາກອນກຳໄລປະກອບດ້ວຍອັດຕາທົ່ວໄປ ແລະ ອັດຕາ ຫລຸດຜ່ອນ (ອັດຕາທະວີຄູນ)ຕາມມາດຕາ 29 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ.

ພື້ນຖານຄິດໄລ່ ແມ່ນ ສ່ວນຜິດດ່ຽງລະຫວ່າງລາຍຮັບລວມ ແລະ ລາຍຈ່າຍລວມທັງໝົດຂອງປີການບັນຊີ (ບັນດາລາຍຈ່າຍສິ້ນເປືອງຕ່າງໆທີ່ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ).

- ກຳນົດເວລາຍື່ນໃບແຈ້ງເສຍອາກອນກຳໄລ ຕໍ່ກົມສ່ວຍສາອາກອນ, ພະແນກສ່ວຍສາອາກອນປະຈຳແຕ່ ລະທ້ອງຖິ່ນ ຕາມທີ່ກຳນົດໄວ້ໃນມາດຕາ 38 ແລະ 39 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນສະບັບເລກ ທີ05/ສພຊ, ລົງວັນທີ 20 ທັນວາ 2011 ຄື:

    - ງວດທີ ໜຶ່ງ ກ່ອນວັນທີ 10 ເມສາຂອງປີ;
    - ງວດທີ ສອງ ກ່ອນວັນທີ 10 ກໍລະກົດຂອງປີ;
    - ງວດທີສາມ ກ່ອນວັນທີ 10 ຕຸລາ ຂອງປີ;
    - ແລະງວດທີ ສີ່ ກ່ອນວັນທີ 10 ມົກກະ ຂອງປີຕໍ່ໄປ.

ຜູ້ເສຍອາກອນກຳໄລ: ບໍລິສັດລັດວິສາຫະກິດຫວຍພັດທະນາ, ຕົວແທນ ຫຼື ສາຂາຈຳໜ່າຍຫວຍພັດທະນາຢູ່ແຂວງ, ນະຄອນຫລວງວຽງຈັນ ຕ້ອງມອບອາກອນກຳໄລລ່ວງໜ້າເປັນງວດ ງວດລະສາມເດືອນ ບົນພື້ນຖານກຳໄລຂອງປີຜ່ານມາ ຫຼື ກຳໄລຄາດຄະເນຂອງປີການບັນຊີ, ສ່ວນຈຳນວນອາກອນກຳໄລຕົວຈິງປະຈຳປີທີ່ ຕ້ອງເສຍ ແລະ ມອບນັ້ນ ໃຫ້ໄລ່ ລຽງຄືນໃນງວດສຸດທ້າຍ ເວລາປິດບັນຊີທ້າຍປີ.

-ໃນກໍລະນີ ອາກອນກໍາໄລທີ່ໄດ້ມອບແລ້ວເປັນແຕ່ລະງວດພາຍໃນປີ ຫາກມີຈຳນວນສູງກວ່າ ອາກອນກຳໄລ ຕົວຈິງປະຈຳປີທີ່ຕ້ອງເສຍ ສ່ວນທີ່ເກີນໃຫ້ຍົກໄປຫັກອອກຈາກອາກອນກຳໄລ ຂອງປີຕໍ່ໄປ.

-ໃນກໍລະນີຫາກມີການຂາດທຶນປະຈຳປີ ຊຶ່ງທາງເຈົ້າໜ້າທີ່ສ່ວຍສາອາກອນໄດ້ກວດກາ ແລະ ຮັບຮູ້ແລ້ວ ມີສິດຍົກເງິນຂາດທຶນດັ່ງກ່າວໄປຫັກອອກຈາກກຳໄລຂອງປີຕໍ່ໄປພາຍໃນກຳນົດ 3 ປີ, ເມື່ອໝົດກຳນົດນີ້ແລ້ວ ເງິນຂາດທຶນທີ່ຍັງເຫລືອຈະບໍ່ໄດ້ຮັບອະນຸຍາດໃຫ້ຫັກອອກຈາກກຳໄລຕໍ່ໄປອີກ (ມາດຕາ 39 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ).

4. ອາກອນລາຍໄດ້

4.1. ອາກອນລາຍໄດ້ຈາກເງິນເດືອນ, ເງິນແຮງງານເພີ້ມໂມງ, ຜົນປະໂຫຍດຢ່າງອື່ນ ໃນແຕ່ລະເດືອນຂອງ ພະ ນັກງານບໍລິສັດລັດວິສາຫະກິດຫວຍພັດທະນາ, ພະນັກງານຂອງບັນດາຕົວແທນ ຫຼື ສາຂາຈຳໜ່າຍຫວຍພັດທະນາຢູ່ແຕ່ລະທ້ອງຖິ່ນ ໃຫ້ເຮັດບັນຊີແຈ້ງເສຍອາກອນລາຍໄດ້ຈາກເງິນເດືອນ ຍື່ນຕໍ່ກົມສ່ວຍສາອາກອນ, ພະແນກສ່ວຍສາອາກອນທ້ອງຖິ່ນ ກ່ອນວັນທີ 15 ຂອງເດືອນຕໍ່ໄປ.

ການຄິດໄລ່ອາກອນ ແມ່ນເອົາລາຍຮັບທັງໝົດພາຍໃນເດືອນຫັກເງິນຫລຸດຜ່ອນພື້ນຖານປະຈຳເດືອນຈຳນວນ 1,000,000 ກີບ, ສ່ວນຍັງເຫລືອ ແມ່ນໃຫ້ເສຍຕາມອັດຕາທະວີຄູນຕາມຕາຕະລາງມາດຕາ 47 ຂໍ້ທີ 1 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ.

4.2 ອາກອນລາຍໄດ້ຂອງຜູ້ຂາຍ ແມ່ນເງິນເປີເຊັນທີ່ໄດ້ຮັບຈາກການຂາຍຫວຍໃນແຕ່ລະຄັ້ງໂດຍມອບໃຫ້ຕົວ ແທນ ຫຼື ສາ ຂາຈຳໜ່າຍ ເປັນຜູ້ຍື່ນບັນຊີແຈ້ງເສຍປະຈຳເດືອນ ທີ່ຂະແໜງສ່ວຍສາອາກອນ ທ້ອງຖິ່ນ ກ່ອນວັນທີ 15 ຂອງເດືອນຕໍ່ໄປ.

ການຄິດໄລ່ອາກອນ ແມ່ນ ເອົາລາຍຮັບທັງໝົດພາຍໃນເດືອນຫັກເງິນຫລຸດຜ່ອນພື້ນຖານປະຈຳເດືອນ ຈຳນວນ 1,000,000 ກີບ, ສ່ວນຍັງເຫລືອແມ່ນໃຫ້ເສຍຕາມອັດຕາທະວີຄູນຕາມຕາຕະລາງມາດຕາ 47 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ.

4.3 ອາກອນລາຍໄດ້ຂອງຜູ້ຖືກລາງວັນຫວຍເປັນເງິນສົດ ຫຼື ເປັນວັດຖຸ ແມ່ນ ຈຳນວນເງິນລາງວັນເປັນເງິນ ຫຼື ວັດຖຸທີ່ໄດ້ ຮັບທີ່ມີມູນຄ່າເກີນກວ່າ 1,000,000 ກີບໂດຍມອບໃຫ້ບໍລິສັດລັດວິສາຫະກິດຫວຍ, ຕົວແທນ ຫຼື ສາຂາຈຳໜ່າຍຫວຍເປັນຜູ້ຄິດໄລ່ຫັກໄວ້ ແລ້ວເຮັດບັນຊີແຈ້ງເສຍພາຍໃນກຳນົດ ສິບວັນ ພາຍຫລັງໄດ້ເບີກຈ່າຍເງິນລາງວັນ.

ການຄິດໄລ່ອາກອນ ແມ່ນ ໃຫ້ເອົາເງິນລາງວັນທັງໝົດທີ່ມີມູນຄ່າເກີນ1,000,000 ກີບ ຄູນໃຫ້ອັດຕາອາກອນ 10% ຕາມມາຕາ 47 ຂໍ້ທີ 6 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ05/ສພຊ, ລົງວັນທີ 20 ທັນວາ 2011.

5. ເງິນປັນຜົນກຳໄລ

ກຳໄລໃນແຕ່ລະປີ ຂອງບໍລິສັດລັດວິສາຫະກິດຫວຍພັດທະນາ, ຕົວແທນ ຫຼື ສາຂາຈຳໜ່າຍຫວຍພັດທະນາທີ່ລັດລົງທຶນ ພາຍຫລັງເສຍອາກອນປະເພດຕ່າງໆແລ້ວໃຫ້ຂະແໜງຄຸ້ມຄອງຊັບສິນຂອງລັດ (ສູນກາງ ແລະ ທ້ອງຖິ່ນ) ແບ່ງປັນຕາມເປົ້າໝາຍການຕົກລົງຂອງສະພາບໍລິຫານ.

6. ບໍລິສັດລັດວິສາຫະກິດຫວຍພັດທະນາ, ຕົວແທນ ຫຼື ສາຂາຈຳໜ່າຍຫວຍພັດທະນາ ຕ້ອງປະຕິບັດການຖືບັນຊີວິສາຫະກິດຕາມກົດໝາຍບັນຊີຢ່າງເຂັ້ມງວດ ແລະ ສົ່ງເອກະສານລາຍງານ :

ໃບສະຫລຸບຊັບສົມບັດ ແລະ ເອກະສານອື່ນໆຕ້ອງນຳສະເໜີຕໍ່ລັດຖະການສ່ວຍສາອາກອນກ່ອນວັນທີ 01 ມີນາຂອງທຸກໆປີ, ສ່ວນບົດບັນທຶກກອງປະຊຸມສະພາບໍລິຫານ, ກອງປະຊຸມຂາຮຸ້ນ ຫຼື ຜູ້ຖືຮຸ້ນຂອງບໍລິສັດ ກ່ຽວກັບການນຳໃຊ້ ຫຼື ແບ່ງປັນຜົນກຳໄລ ຕ້ອງຍື່ນຕໍ່ລັດຖະການສ່ວຍສາອາກອນພາຍໃນກຳນົດ ສິບວັນ, ຫລັງຈາກກອງປະຊຸມສະພາບໍລິຫານ ຫຼື ກອງປະຊຸມຂາຮຸ້ນ ຫຼື ຜູ້ຖືຮຸ້ນສິ້ນສຸດລົງ.

ເອກະສານລາຍງານປະຈຳປີ (12 ເດືອນ) ມີດັ່ງນີ້:

+ ໃບດຸ່ນດ່ຽງ (ກ່ອນ ແລະຫລັງການກວດນັບ);
+ ໃບລາຍງານບັນຊີຜົນໄດ້ຮັບ (ກ່ອນ ແລະ ຫລັງການກວດນັບ);
+ ໃບສະຫລຸບຊັບສົມບັດ ຊັບສິນ-ໜີ້ສິນ (ກ່ອນ ແລະ ຫລັງ ການກວດນັບ);
+ ຕາຕະລາງຫັກຄ່າຫລຸ້ຍຫ້ຽນຊັບສົມບັດ;
+ ຕາຕະລາງລະດັບຖານະການເງິນ;

+ ຕາຕະລາງການມອບພັນທະໃຫ້ລັດ;

+ ສະຫລຸບ ແລະຂື້ນແຜນການຂະຫຍາຍການຜະລິດ ແລະ ການລົງທືນ;

+ ສ້າງແຜນການ ການເງິນ ລາຍຮັບ-ລາຍຈ່າຍປະຈຳປີ (ນັບທັງແຜນການມອບພັນທະ);

+ ບົດບັນທຶກກອງປະຊຸມສະພາບໍລິຫານ, ກອງປະຊຸມຂາຮຸ້ນ (ຖ້າມີ).

7. ມອບໃຫ້ຫົວໜ້າກົມສ່ວຍສາອາກອນ,ຫົວໜ້າພະແນກການເງິນ,ຫົວໜ້າພະແນກສ່ວຍສາອາກອນປະຈຳ ແຂວງ, ນະຄອນຫລວງ ປະສານສົມທົບກັບບໍລິສັດລັດວິສາຫະກິດຫວຍພັດທະນາ, ຕົວແທນ ຫຼື ສາຂາຈຳໜ່າຍຫວຍພັດທະນາ ແລະ ຜູ້ຂາຍຍ່ອຍໃບຫວຍໃນຂອບເຂດທົ່ວປະເທດຈັດຕັ້ງປະຕິບັດຄຳສັ່ງແນະນຳສະບັບນີ້ຢ່າງເຂັ້ມງວດ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

8. ຄຳສັ່ງແນະນຳສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຄຳສັ່ງແນະນຳສະບັບເລກທີ 2073/ກງ,ລົງວັນທີ 30 ກັນຍາ 2004.

ລັດຖະມົນຕີວ່າການກະຊວງການເງິນ.

ພູເພັດ ຄຳພູນວົງ